ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຊື່ເຈົ້າຂອງໂຄງການ: ອົງການກາແດງແຫ່ງຊາດລາວ ເລກທີ: 235 /ກດລ

ນະຄອນຫລວງວຽງຈັນ,ວັນທີ: 04/03/2026

# ໜັງສືແຈ້ງເຊີນປະມູນ

1. ອົງການກາແດງແຫ່ງຊາດລາວ ໄດ້ຮັບອະນຸມັດງົບປະມານລັດຖະບານ ສົກປີ 2026 (ພາກ62) ເພື່ອດຳເນີນການຈັດຊື້ສິນຄ້າ ເຊັ່ນ:ເຄື່ອງຮັບໃຊ້ທາງການແພດ ແລະ ເຄື່ອງບຳລຸງ, ດ້ວຍການດຳເນີນການປະມູນແບບເປີດກ້ວາງ. ຄະນະກຳມະການການປະມູນ ຈັດຊື້ເຄື່ອງຮັບໃຊ້ທາງການແພດ ແລະ ເຄື່ອງບຳລຸງ ສຳລັບວຽກງານເລືອດປະຈຳປີ 2026 ໃຫ້ ສະຖາບັນເລືອດແຫ່ງຊາດ ແລະ ສູນເລືອດແຂວງທົ່ວປະເທດ,ຂໍເຊີນ ບັນດາບໍລິສັດ/ວິສາຫະກິດ/ຮ້ານ ທີ່ສົນໃຈ ແລະ ມີຄຸນນະວຸດທິເໝາະສົມ ເຂົ້າຍື່ນຊອງປະມູນ ສຳລັບສະໜອງສິນຄ້າ ເຄື່ອງຮັບໃຊ້ທາງການແພດ ແລະ ເຄື່ອງບຳລຸງ ໂດຍແບ່ງ ເປັນສອງພູດຄື:

   **ພູດທີ 01:** ເຄື່ອງຮັບໃຊ້ທາງການແພດ, ໄລຍະການຈັດສົ່ງແມ່ນ ຊ້າສຸດບໍ່ໃຫ້ເກີນ 1 ເດືອນ.

   **ພູດທີ 02:** ເຄື່ອງບຳລຸງ, ໄລຍະການຈັດສົ່ງແມ່ນ ຊ້າສຸດບໍ່ໃຫ້ເກີນ 1 ເດືອນ.

2. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນແບບເປີດກວ້າງທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ: 0477/ກງ, ລົງວັນທີ 13 ກຸມພາ 2019.

3. ການປະມູນນີ້ ອະນຸຍາດໃຫ້ທຸກ ບໍລິສັດ/ວິສາຫະກິດ/ຮ້ານ ທີ່ມີຄຸນນະວຸດທິເໝາະສົມ, ມີໃບອະນຸຍາດດຳເນີນທຸລະກິດຖືກຕ້ອງຕາມກົດໝາຍທີ່ກ່ຽວພັນກັບການສະໜອງສິນຄ້າ, ອຸປະກອນ ແລະ ການບໍລິການທີ່ຕ້ອງການ ແລະມີໃບຢັ້ງຢືນການເສຍພັນທະອາກອນເປັນປົກກະຕິຕາມລະບຽບການຂອງຂະແໜງການສ່ວຍສາອາກອນ;

4. ບັນດາບໍລິສັດ/ວິສາຫະກິດ/ຮ້ານ ທີ່ມີຄຸນນະວຸດທິເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນເອົາເອກກະສານປະມູນໄດ້ທີ່ ສະຖາບັນເລືອດແຫ່ງຊາດ ອົງການກາແດງແຫ່ງຊາດລາວ ຕຶກ 4ຊັ້ນ, ຢູ່ຊັ້ນ4 ບ້ານຊຽງຍືນ ເມືອງ ຈັນທະບູລີ ນະຄອນຫລວງວຽງຈັນ, ໂທລະສັບ : 021 218922, 22230353, 28034992, ອີເມວ chanthala2010@gmail.com,ແລະ ກວດກາເບິ່ງເອກະສານປະມູນໄດ້ທີ່ ຕາມທີ່ຢູ່ຂ້າງເທິງໃນວັນເວລາລັດຖະການ.

5. ບັນດາບໍລິສັດ/ວິສາຫະກິດ/ຮ້ານໃດ ທີ່ຕ້ອງການຊື້ເອກະສານປະມູນ ພູດທີ 1 ແລະ ພູດທີ 2 ແມ່ນໃຫ້ມາພົວພັນເອົາ ຕາມທີ່ຢູ່ຂ້າງເທິງໃນວັນເວລາລັດຖະການ ເລີ່ມຂາຍແຕ່ວັນທີ 06/03/2026 ເປັນຕົ້ນໄປ. ຊອງປະມູນ ພູດທີ 1: ລາຄາ 1,500,000ກີບ/ຊອງ ແລະ ຊອງປະມູນ ພູດ 2: ລາຄາ 500,000 ກີບ/ຊອງ, ຈຳນວນເງິນດັ່ງກ່າວຈະບໍ່ໄດ້ສົ່ງຄືນ ວິທີການຊຳລະຕ້ອງຈ່າຍເປັນເງິນສົດ.

6. **ຊອງປະມູນ ພູດທີ 01**: ຕ້ອງສົ່ງກ່ອນເວລາ 09:00 ໂມງ ຂອງວັນທີ: 08/04/2026. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆຊອງແມ່ນຈະປິດຮັບແລະເປີດຊອງໃນເວລາ 09:00ໂມງ, ຂອງວັນທີ: 08/04/2026;

7. **ຊອງປະມູນ ພູດທີ 02**: ຕ້ອງສົ່ງກ່ອນເວລາ 10:30 ໂມງ ຂອງວັນທີ: 08/04/2026. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆຊອງແມ່ນຈະປິດຮັບແລະເປີດຊອງໃນເວລາ 10:30ໂມງ, ຂອງວັນທີ: 08/04/2026, ຊອງປະມູນທັງສອງພູດ ແມ່ນຈະເປີດຊອງຂຶ້ນທີ່ ຫ້ອງປະຊຸມ ສະຖາບັນເລືອດແຫ່ງຊາດ ອົງການກາແດງແຫ່ງຊາດລາວ ຕຶກໃໝ່ (ຊັ້ນ 4) ສະຖານທີ່ຕັ້ງຢູ່: ບ້ານ ຊຽງຍືນ, ເມືອງຈັນທະບູລີ, ນະຄອນຫລວງວຽງຈັນ (ເຂດທາດດຳ). ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນຳ.

8. ບັນດາບໍລິສັດ-ວິສາຫະກິດ-ຮ້ານ ທີ່ສົນໃຈເຂົ້າຮ່ວມການປະມູນຕ້ອງປະກອບແບບຟອມໃຫ້ຄົບຖ້ວນຕາມເອກະສານເງື່ອນໄຂທີ່ໄດ້ກຳນົດໄວ້ຢ່າງຖືກຕ້ອງ ແລະຄົບຖ້ວນ.

9. ດັ່ງນັ້ນຈຶ່ງແຈ້ງມາຍັງ ບັນດາບໍລິສັດ-ວິສາຫະກິດ-ຮ້ານ ທີ່ສົນໃຈເຂົ້າຮ່ວມການປະມູນຊາບ.

**ຫົວໜ້າຫ້ອງການ**

ອົງການກາແດງແຫ່ງຊາດລາວ ຫ້ອງການ

ຮອງຈັນ ຈັນທະວົງ